

# ເອກະລັກຂອງຊົນເຜົ່າ

# ແສກ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ແຊກ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າ ແຊກ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ແຊກ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ, ບາງຮີດ ແລະ ປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ແຊກ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕົ້ນກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ຊົນເຜົ່າ ແຊກ ໄດ້ຕັ້ງຖິ່ນຖານບ້ານເຮືອນຢູ່ 2 ແຂວງພາກກາງຄື: ແຂວງບໍລິຄຳໄຊ ແລະ ແຂວງ ຄຳມ່ວນ. ຊົນເຜົ່າແຊກ ມີປະຊາກອນທັງໝົດ 3,733 ຄົນ, ຍິງ 1.934 ຄົນ, ອັດຕາສະເລ່ຍເທົ່າກັບ 0,1% ຂອງພົນລະເມືອງທົ່ວປະເທດ

( ຜົນການສຳຫຼວດພົນລະເມືອງ ຄັ້ງທີ III 2005).




- ຊົນເຜົ່າ ແຊກ ທີ່ແຈກຢາຍຢູ່ແຕ່ລະບ່ອນ
  - ແຂວງ ບໍລິຄຳໄຊ: ເມືອງ ຄຳເກີດ
  - ແຂວງ ຄຳມ່ວນ: ເມືອງ ນາກາຍ, ເມືອງ ຍົມມະລາດ, ເມືອງ ທ່າແຂກ, ເມືອງ ຫີນບູນ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າ ແຊກ ໄດ້ເຄື່ອນຍ້າຍເຂົ້າມາລາວຈາກດິນແດນທາງພາກເໜືອໂດຍໄດ້ຜ່ານ ແຂວງເຫງ້ອານ ແຫ່ງ ສສ ຫວຽດນາມ ໃນລະຫວ່າງສະຕະວັດ ທີ XVII. ຊົນເຜົ່າ ແຊກ ຈຳນວນໜຶ່ງໄດ້ຍົກຍ້າຍຈາກຖິ່ນຖານພູມລຳເນົາເດີມໄປຊອກທຳມາຫາກິນຫຼາຍບ່ອນຕ່າງກັນ. ຈຳນວນໜຶ່ງໄດ້ເຂົ້າໄປທາງ ປະເທດຈີນ ແລະ ຈຳນວນໜຶ່ງກໍໄດ້ໄປຕັ້ງຫລັກປັກຖານຢູ່ເຂດຊາຍແດນ ລາວ-ຫວຽດນາມ ຊຶ່ງເປັນໝູ່ບ້ານໃຫຍ່ຈົນກາຍເປັນຕົວເມືອງຈຶ່ງມີຊື່ລືຊາປະກົດວ່າຊື່ ເມືອງ“ບຳ້”, ເມືອງດັ່ງກ່າວໄດ້ຖືກເສິກສົງຄາມຮຸກຮານຮາວີໃນທີ່ສຸດ ເມືອງ “ບຳ້” ໄດ້ຖືກທຳລາຍຈາກຝ່າຍກົງກັນຂ້າມ. ຊົນເຜົ່າ ແຊກ ຈຳນວນໜຶ່ງແມ່ນຍັງຢູ່ປະເທດຈີນ ແລະ ຈຳນວນໜຶ່ງກໍຍັງຢູ່ປະເທດຫວຽດນາມ ໂດຍສະເພາະຢູ່ແຂວງ ເຫງ້ອານ.

“ແຊກ” ແມ່ນຊື່ເອີ້ນຂອງຊົນເຜົ່າໜຶ່ງ, ຊື່ດັ່ງກ່າວບໍ່ມີຜູ້ໃດຮູ້ຄວາມໝາຍເຂົາເຈົ້າເກີດຂຶ້ນໄດ້ໃຫຍ່ຂຶ້ນມາກໍໄດ້ຍິນຊື່ນີ້ແລ້ວ ຊົນເຜົ່າອື່ນກໍເອີ້ນພວກເຂົາວ່າ: “ແຊກ” ແລະ ຊື່ທີ່ໃຊ້ໃນທາງລັດຖະການກໍແມ່ນ ຊົນເຜົ່າ ແຊກ.

# ອາຊີບຂອງຊົນເຜົ່າ ແຊກ

ຊົນເຜົ່າ ແສກ ໃນສະໄໝກ່ອນມີຮູບແບບການຜະລິດເໝືອນກັນກັບຊົນເຜົ່າອື່ນໆ ຄື: ການເຮັດໄຮ່ປູກເຂົ້າຈ້າວ, ກ້ວຍ, ເຜືອກ, ມັນ, ປູກມອນລ້ຽງມ້ອນ, ເກັບເດັດຜັກປ່າມາປຸງແຕ່ງອາຫານ, ລ່າເນື້ອສັດປ່າມາເປັນອາຫານແຕ່ລະວັນ. ພວກເຂົາເຈົ້າໄດ້ຫັນຮູບແບບການຜະລິດຈາກອັນເກົ່າມາສູ່ອັນໃໝ່, ຈາກເຮັດໄຮ່ມາເຮັດນາໃນປີ ຄສ. 1957 ນັບແຕ່ນັ້ນມາຮູບແບບການດຳລົງຊີວິດເຂົາເຈົ້າກໍຄ່ອຍໆ ມີການປ່ຽນແປງ ດີຂຶ້ນເລື້ອຍໆ.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ

# ທີ່ຕັ້ງບ້ານ ແລະ ເຮືອນ



ພາບໂດຍ: ກົມຊົນເຜົ່າ

ການຊອກຫາສະຖານທີ່ປຸກເຮືອນຂອງຊົນເຜົ່າ ແຊກ ແມ່ນອີງຕາມອົງການປົກຄອງຂັ້ນບ້ານເປັນຫລັກ. ເຮືອນມີລັກສະນະແບບດຽວກັນກັບໄທເມີ້ຍ ການຈັດວາງພາຍໃນຈະແບ່ງເປັນບ່ອນນອນຂອງໃຜຂອງລາວ, ທຳອິດແມ່ນຫ້ອງລ້ອກ (ຫ້ອງພະເປັນບ່ອນບູຊາ), ຈາກນັ້ນ, ແມ່ນ ຫ້ອງຂອງພໍ່ແມ່, ຫ້ອງລູກສາວ, ລູກຊາຍ ແລະ ສຸດທ້າຍແມ່ນຫ້ອງ ລູກໄພ້. ຢູ່ນອກເຮືອນໃກ້ກັບຫ້ອງລູກໄພ້ຈະມີຄົກ ຕຳເຂົ້າ.



ພາບໂດຍ: ກົມຊົນເຜົ່າ

# ເຄື່ອງນຸ່ງຫົ່ມ

ໃນເມື່ອກ່ອນຊົນເຜົ່າ ແຊກ ມີເຄື່ອງນຸ່ງຫົ່ມດ້ວຍແພຝ້າຍທີ່ຍ້ອມດ້ວຍສີຄາມ, ສີດຳ, ສີໝໍ້ນິນ, ໃຊ້ດ້ວຍມືຫຍິບເປັນໂສ້ງ, ເສື້ອ, ຜູ່ຊາຍຈະນຸ່ງຜ້າສະໂລ່ງ ຫຼື ຜ້າກະຕ່ຽວ, ແມ່ຍິງຈະນຸ່ງສິ້ນທຳມະດາ ແລະ ເສື້ອຜ້າ ທີ່ສາມາດຜະລິດດ້ວຍຕົນເອງ ຫຼື ບາງປະເພດກໍໄດ້ແລກປ່ຽນຈາກຊົນເຜົ່າ ລາວ ແລະ ຊົນເຜົ່າອື່ນໆ ທີ່ຢູ່ໃກ້ຄຽງ.

# ອາຫານ ແລະ ເຄື່ອງດື່ມ

ສຳລັບອາຫານທີ່ຊົນເຜົ່າ ແຊກ ສ່ວນຫຼາຍແມ່ນການຫາໄດ້ຈາກທຳມະຊາດເຊັ່ນ: ເນື້ອສັດປ່າມາປຸງແຕ່ງເປັນອາຫານປະເພດຕ່າງໆຄື: ປີ້ງຊີ້ນໝູປ່າ, ລາບ, ລາບເລືອດ, ຕົ້ມຜັກ, ແກງຜັກ, ແຈ່ວ, ດື່ມນ້ຳດິບ, ດື່ມເຫລົ້າຂາວ ແລະ ປັດຈຸບັນມີການປ່ຽນແປງໄປຕາມຍຸກສະໄໝ ພ້ອມທັງມີການພັດທະນາໃຫ້ຖືກຕາມຫຼັກການອະນາໄມເຊັ່ນ: ການດື່ມນ້ຳຕົ້ມ, ນ້ຳຜະລິດຈາກໂຮງງານທັງພາຍໃນ ແລະ ຕ່າງປະເທດຕາມສະພາບຄວາມເປັນຈິງຂອງຍຸກນີ້.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ

# ຄວາມເຊື່ອຖື

ຕາມຄວາມເຊື່ອຂອງຊົນເຜົ່າ ແຊກ ມີຄວາມເຄົາລົບນັບຖື ຜີພໍ່, ຜີແມ່, ຜີຟ້າ, ຜີແຖນຢ່າງໜັກໜ່ວງແຕ່ລະດູການ ແລະ ວັນສິນ ພວກເຂົາເຈົ້າກໍໄດ້ບູຊານົບໄຫວ້ ແລະ ລ້ຽງຜີເປັນປະຈຳ. ຊຶ່ງໄດ້ໝາຍເຖິງຄວາມກະຕັນຍູ, ກະຕະເວທີຂອງບັນດາລູກໆ ທີ່ມີຕໍ່ບັນ ພະບູລຸດ. ພ້ອມກັນນັ້ນ, ເຂົາເຈົ້າຍັງມີພິທີກຳບູຊາຜີທີ່ໄດ້ດຳເນີນກ່ອນຈະຟາດເຂົ້າ ຫຼື ເອົາເຂົ້າຂຶ້ນເລົ້າໂດຍມີການຂ້າໝູ 1 ໂຕ, ເຮັດລາບເລືອດ, ແກງ, ຕົ້ມໝູ ແລະ ອື່ນໆ ແລ້ວມອບພິທີນີ້ໃຫ້ເຈົ້າພໍ່ມົດ, ແມ່ມົດ ຫຼື ພໍ່ໝໍ , ແມ່ໝໍທີ່ມີຄວາມສາມາດສື່ສານກັບບັນດາຜີຕ່າງໆ, ທັງມີການເວົ້າວ່າຕ່າງໆ ນາໆ, ບາງຄັ້ງພວກເຂົາຈະດຳເນີນການບະ (ກ່ອນຈະດຳເນີນກິດຈະການຕ່າງ) ເພື່ອເຮັດໃຫ້ມີການປົກປັກຮັກສາຊ່ວຍກິດຈະການດັ່ງກ່າວໃຫ້ມີຄວາມຈະເລີນງອກງາມຂຶ້ນເລື້ອຍໆ ນອກຈາກນີ້, ໃນຮອບວຽນປີໜຶ່ງໆ ທີ່ພວກເຂົາເຈົ້າຂາດບໍ່ໄດ້ແມ່ນບຸນກິນເຂົ້າໃໝ່ພາຍຫລັງເຮັດໄຮ່, ເຮັດນາ ແລະ ເກັບກ່ຽວຜົນລະປູກແລ້ວກໍຈະຈັດງານບຸນຂຶ້ນໃນເດືອນນັ້ນ ແລະ ການຈັດງານເຮັດ ບຸນກິນເຕດ (ບຸນປີໃໝ່) ການຈັດງານບຸນແມ່ນໄດ້ອີງຕາມປະຕິທິນຂອງ ຫວຽດນາມ ແລະ ຈັດໃນມື້ດຽວກັນທຸກໆປີ, ພາຍໃນເດືອນ 3 ລາວ ແຮມ 14 ຄ່ຳ, ກຳນົດແມ່ນ 3-7 ມື້ ຊຶ່ງໄດ້ປະຕິບັດຄື: ມີການຄະລຳ ແລະ ມີການຄົບວັນຈົນເຖິງ 7ມື້, ພາຍໃນສາມມື້ບໍ່ໃຫ້ມີການ ຕັດຟືນ, ຕຳເຂົ້າ, ມື້ທີ 3 ມີການຈ້ຳຜີພໍ່, ຜີແມ່. ຫລັງຈາກນັ້ນ, ຈຶ່ງມີການຈ້ຳຜີເຈົ້າຖິ່ນເຈົ້າຖານຊຶ່ງເປັນຜີທີ່ສູງກວ່າໝູ່ໃນການຄຸ້ມຄອງໝົດທຸກຄົນພາຍໃນບ້ານ. ນອກຈາກການລ້ຽງຜີດັ່ງກ່າວຍັງມີປະເພນີການທັບສາກ (ໝາຍເຖິງການເຕັ້ນລຳໄມ້ໄຜ່) ໃຫ້ຊາວໜຸ່ມລົງສະໜາມ ແລະ ຄົບວັນ 7 ມື້ ແລະ ມື້ທີ 7 ຈະມີການຈັດຕັ້ງໃຫ້ເຈົ້າກົກ, ເຈົ້າເຫຼົ່າຈ້ຳຜີເຈົ້າຖິ່ນເຈົ້າຖານ ແລະ ມີການດື່ມເຫຼົ້າໄຫດຽວຮ່ວມກັນໝົດບ້ານ.

# ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ສຳລັບເຄື່ອງດົນຕີກໍມີປະເພດ: ກອງ, ແຄນ, ຄ້ອງ, ແສ່ງ ແລະ ອື່ນໆທີ່ໃຊ້ປະກອບເຂົ້າເປັນເຄື່ອງດົນຕີທີ່ເອົາມາເສບມ່ວນໃນເວລາທີ່ມີງານບຸນ, ງານດອງ ແລະ ງານສົ່ງສະການ. ແລະ ຈະມີຜູ້ເຖົ້າຜູ້ແກ່ຢູ່ບ້ານມາຮ້ອງເພງ ແລະ ຂັບລຳຕາມຮີດຄອງຂອງພວກເຂົາ.

# ພາສາປາກເວົ້າ

ຊົນເຜົ່າ ແສກ ມີພາສາປາກເວົ້າເປັນຂອງຕົນ, ເພື່ອໃຊ້ໃນການສື່ສານກັບຊົນເຜົ່າຕົນ, ສ່ວນການສື່ສານກັບຊົນເຜົ່າຕ່າງໆ ແມ່ນ ໃຊ້ພາສາລາວ ແລະ ຈັດເຂົ້າໃນໝວດພາສາ ລາວ-ໄຕ.

*ຄັດຈາກປຶ້ມບັນດາຊົນເຜົ່າໃນ ສປປ ລາວ*

# ການສົມທຽບ
# ພາສາ ລາວ ກັບ ພາສາ ແຊກ

| ລຳດັບ | ພາສາລາວ | ພາສາແຊກ |
|---|---|---|
| 01 | ຂອບໃຈ | ຂອບຈີ |
| 02 | ຂໍໂທດ | ທໍຣໂທດ |
| 03 | ເຈົ້າຊື່ຫຍັງ? | ໄອ້ຊໍ້ບຣູຊັນ? |
| 04 | ເຮັດຫຍັງຢູ່? | ຣິດທາຢູ? |
| 05 | ກິນເຂົ້າແລ້ວບໍ? | ກິນເຂົ້າອາແລ່ວບ້ຳ? |
| 06 | ພົບກັນໃໝ່ | ພາມດຽວມໍ່ |
| 07 | ບໍ່ເປັນຫຍັງ | ໂບ່ຟູ້ນທາ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ແຂວງ ຄຳມ່ວນ*